ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ອຸດສາຫະກຳ ແລະ ການຄ້າ

ເລກທີ 0001 /ອຄ.ກມວ

ນະຄອນຫຼວງວຽງຈັນ, ວັນທີ 04 ມັງກອນ 2022

# ຂໍ້ຕົກລົງ
# ວ່າດ້ວຍ ລາງວັນຄຸນນະພາບແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍມາດຕະຖານ ສະບັບເລກທີ 49/ສພຊ, ວັນທີ 18 ກໍລະກົດ 2014;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມມາດຕະຖານ ແລະ ວັດແທກ ສະບັບເລກທີ 1210/ກອຄ.ກມວ, ລົງວັນທີ 27 ທັນວາ 2021.

## ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຄັດເລືອກ ແລະ ມອບລາງວັນຄຸນນະພາບແຫ່ງຊາດໃຫ້ແກ່ວິສາຫະກິດທີ່ດີເດັ່ນ ເພື່ອຊຸກຍູ້ສົ່ງເສີມການຍົກສູງຄຸນນະພາບ ແລະ ປະສິດທິພາບຂອງການຜະລິດ ແລະ ການສະໜອງບໍລິການໃຫ້ນັບມື້ນັບດີຂຶ້ນເປັນກ້າວໆ ແນໃສ່ສ້າງຄວາມເຂັ້ມແຂງໃຫ້ທຸລະກິດພາຍໃນ ໃຫ້ເຕີບໃຫຍ່ເຂັ້ມແຂງ, ສາມາດແຂ່ງຂັນໃນຕະຫຼາດພາຍໃນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ລາງວັນຄຸນນະພາບແຫ່ງຊາດ**

ລາງວັນຄຸນນະພາບແຫ່ງຊາດລາວ ຂຽນຫຍໍ້ "ລຄຊ" ຂຽນເປັນພາສາສາກົນ Lao National Quality Award ຂຽນຫຍໍ້ "LQA" ແມ່ນຮູບການຍ້ອງຍໍວິສາຫະກິດ ທີ່ມີການຄຸ້ມຄອງການຜະລິດ ແລະ ການບໍລິການ ທີ່ມີຄຸນນະພາບດີເດັ່ນລະດັບຊາດ ອອກສູ່ສັງຄົມ ແລະ ມີການເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ວິສາຫະກິດ** ໝາຍເຖິງ ຫົວໜ່ວຍທຸລະກິດຂອງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວ ຢ່າງຖືກຕ້ອງຕາມ ກົດໝາຍວ່າດ້ວຍວິສາຫະກິດ;

2. **ວິສາຫະກິດການຜະລິດຂະໜາດໃຫຍ່** ໝາຍເຖິງ ວິສາຫະກິດ ທີ່ນຳໃຊ້ແຮງງານໃນການຜະລິດ ສະເລ່ຍປະຈຳປີແຕ່ ໜຶ່ງຮ້ອຍ ຄົນຂຶ້ນໄປ, ມີມູນຄ່າຊັບສິນທັງໝົດຫຼາຍກວ່າ ສີ່ຕື້ກີບ ແລະ ມີຍອດລາຍຮັບທຸລະກິດປະຈຳປີ ຫຼາຍກວ່າ ສີ່ຕື້ກີບ;
3. **ວິສາຫະກິດການຜະລິດຂະໜາດນ້ອຍ ແລະ ກາງ** ໝາຍເຖິງ ວິສາຫະກິດ ທີ່ນຳໃຊ້ແຮງງານໃນການຜະລິດ ສະເລ່ຍປະຈຳປີຕ່ຳກວ່າ ໜຶ່ງຮ້ອຍ ຄົນ, ມີມູນຄ່າຊັບສິນທັງໝົດຕ່ຳກວ່າ ສີ່ຕື້ກີບ ແລະ ມີຍອດລາຍຮັບທຸລະກິດປະຈຳປີຕ່ຳກວ່າ ສີ່ຕື້ກີບ;
4. **ວິສາຫະກິດການບໍລິການຂະໜາດໃຫຍ່** ໝາຍເຖິງ ວິສາຫະກິດ ທີ່ນຳໃຊ້ແຮງງານໃນການໃຫ້ບໍລິການ ສະເລ່ຍປະຈຳປີແຕ່ ໜຶ່ງຮ້ອຍ ຄົນຂຶ້ນໄປ, ມີມູນຄ່າຊັບສິນທັງໝົດຫຼາຍກວ່າ ຫົກຕື້ກີບ ແລະ ມີຍອດລາຍຮັບທຸລະກິດປະຈຳປີຫຼາຍກວ່າ ສີ່ຕື້ກີບ;
5. **ວິສາຫະກິດການບໍລິການຂະໜາດນ້ອຍ ແລະ ກາງ** ໝາຍເຖິງ ວິສາຫະກິດ ທີ່ນຳໃຊ້ແຮງງານໃນການໃຫ້ບໍລິການ ສະເລ່ຍປະຈຳປີຕ່ຳກວ່າ ໜຶ່ງຮ້ອຍ ຄົນ, ມີມູນຄ່າຊັບສິນທັງໝົດຕ່ຳກວ່າ ຫົກຕື້ກີບ ແລະ ມີຍອດລາຍຮັບທຸລະກິດປະຈຳປີຕ່ຳກວ່າ ສີ່ຕື້ກີບ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຂົ້າຮ່ວມຂະບວນການແຂ່ງຂັນ ແລະ ພິຈາລະນາຄັດເລືອກລາງວັນຄຸນນະພາບແຫ່ງຊາດ.

## ໝວດທີ 2
## ປະເພດ ແລະ ຜົນປະໂຫຍດ ຂອງລາງວັນຄຸນນະພາບແຫ່ງຊາດ

**ມາດຕາ 5 ປະເພດລາງວັນຄຸນນະພາບແຫ່ງຊາດ**

ລາງວັນຄຸນນະພາບແຫ່ງຊາດ ມີ ສອງ ປະເພດ ຄື:

1. ລາງວັນ ຂັນຄຳ ຄຸນນະພາບແຫ່ງຊາດ;
2. ລາງວັນ ຂັນເງິນ ຄຸນນະພາບແຫ່ງຊາດ.

**ມາດຕາ 6 ຈຳນວນລາງວັນຄຸນນະພາບແຫ່ງຊາດ**

ລາງວັນ ຂັນຄຳ ແລະ ຂັນເງິນ ຄຸນນະພາບແຫ່ງຊາດ ແມ່ນຈະມອບໃຫ້ບັນດາວິສາຫະກິດ ທີ່ໄດ້ຮັບການຄັດເລືອກເປັນວິສາຫະກິດທີ່ມີການຄຸ້ມຄອງການຜະລິດ ແລະ ການບໍລິການ ທີ່ດີເລີດ ຫຼື ດີເດັ່ນ ຕາມມາດຖານຄັດເລືອກ ທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້ ໂດຍບໍ່ຈຳກັດຈຳນວນລາງວັນ.

**ມາດຕາ 7 ຜົນປະໂຫຍດຈາກການໄດ້ຮັບລາງວັນຄຸນນະພາບແຫ່ງຊາດ**

ວິສາຫະກິດ ທີ່ໄດ້ຮັບລາງວັນຄຸນນະພາບແຫ່ງຊາດ ຈະໄດ້ຮັບຜົນປະໂຫຍດ ດັ່ງລຸ່ມນີ້:

1. ວິສາຫະກິດທີ່ໄດ້ຮັບລາງວັນຄຸນນະພາບແຫ່ງຊາດ ຈະໄດ້ຮັບການຍ້ອງຍໍຊົມເຊີຍ ແລະ ສົມລະສົມຜົນງານ ຕາມລະບຽບກົດໝາຍ;
2. ວິສາຫະກິດ ທີ່ໄດ້ຮັບລາງວັນ ຂັນຄຳ ຄຸນນະພາບແຫ່ງຊາດ ຈະໄດ້ຮັບການຄັດເລືອກເຂົ້າຮ່ວມການແຂ່ງຂັນຄຸນນະພາບດີເດັ່ນໃນລະດັບພາກພື້ນ ແລະ ສາກົນ, ສາມາດນຳໃຊ້ລາງວັນເຂົ້າໃນການໂຄສະນາສິນຄ້າ ຫຼື ການບໍລິການຂອງຕົນ ເປັນເວລາ ສາມ ປີ ນັບແຕ່ວັນທີ່ໄດ້ຮັບລາງວັນ;
3. ວິສາຫະກິດ ທີ່ໄດ້ຮັບລາງວັນ ຂັນເງິນ ຄຸນນະພາບແຫ່ງຊາດ ສາມາດນຳໃຊ້ລາງວັນເຂົ້າໃນການໂຄສະນາສິນຄ້າ ຫຼື ການບໍລິການຂອງຕົນ ເປັນເວລາ ສາມ ປີ ນັບແຕ່ວັນທີ່ໄດ້ຮັບລາງວັນ.

## ໝວດທີ 3
## ການຄັດເລືອກລາງວັນຄຸນນະພາບແຫ່ງຊາດ

**ມາດຕາ 8 ການປະກາດແຈ້ງການ ກ່ຽວກັບການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ**

ກົມມາດຕະຖານ ແລະ ວັດແທກ ຕ້ອງອອກປະກາດແຈ້ງການ ກ່ຽວກັບ ການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ຜ່ານສື່ຕ່າງໆ ຢ່າງໜ້ອຍ ເກົ້າສິບ ວັນກ່ອນວັນດຳເນີນການຄັດເລືອກ ເພື່ອໃຫ້ວິສາຫະກິດທີ່ມີຄວາມສົນໃຈເຂົ້າຮ່ວມການແຂ່ງຂັນຄັດເລືອກ ຮັບຊາບຢ່າງທົ່ວເຖິງ.

**ມາດຕາ 9 ກຳນົດເວລາການຄັດເລືອກ ແລະ ມອບລາງວັນຄຸນນະພາບແຫ່ງຊາດ**

ການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ ຈັດຂຶ້ນ ປີລະຄັ້ງ ແລະ ກຳນົດເອົາວັນທີ 14 ຕຸລາ ຊຶ່ງເປັນວັນມາດຕະຖານສາກົນ ເປັນມື້ຈັດພິທີມອບລາງວັນຄຸນນະພາບແຫ່ງຊາດ.

**ມາດຕາ 10 ຜູ້ເຂົ້າຮ່ວມການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ**

ຜູ້ເຂົ້າຮ່ວມໃນການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ ແມ່ນວິສາຫະກິດທີ່ດຳເນີນການຜະລິດ ແລະ ການບໍລິການ ທີ່ໄດ້ລົງທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ ຊຶ່ງຈັດແບ່ງອອກເປັນ 4 ປະເພດ ດັ່ງນີ້:

1. ວິສາຫະກິດ ການຜະລິດຂະໜາດໃຫຍ່;
2. ວິສາຫະກິດ ການຜະລິດຂະໜາດນ້ອຍ ແລະ ກາງ;
3. ວິສາຫະກິດ ການບໍລິການຂະໜາດໃຫຍ່;
4. ວິສາຫະກິດ ການບໍລິການຂະໜາດນ້ອຍ ແລະ ກາງ.

**ມາດຕາ 11 ເງື່ອນໄຂຂອງຜູ້ເຂົ້າຮ່ວມການແຂ່ງຂັນຄັດເລືອກຮັບລາງວັນຄຸນນະພາບແຫ່ງຊາດ**

ຜູ້ເຂົ້າຮ່ວມໃນການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ ຕ້ອງມີເງື່ອນໄຂ ຄືດັ່ງນີ້:

1. ເປັນວິສາຫະກິດ ທີ່ມີເງື່ອນໄຂຄົບຖ້ວນຖືກຕ້ອງຕາມລະບຽບກົດໝາຍ ແລະ ມີການເຄື່ອນໄຫວດຳເນີນທຸລະກິດຢ່າງຕໍ່ເນື່ອງຢູ່ ສປປ ລາວ ເປັນເວລາຢ່າງໜ້ອຍ 36 ເດືອນ;
2. ມີເຄື່ອງໝາຍການຄ້າ ແລະ ລະບົບການຄຸ້ມຄອງບໍລິຫານຄຸນນະພາບ.

**ມາດຕາ 12 ຂັ້ນຕອນການສະໝັກເຂົ້າຮ່ວມການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ**

ການສະໝັກເຂົ້າຮ່ວມການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ ປະກອບມີ ສອງ ຂັ້ນຕອນ ດັ່ງນີ້:

1. ລົງທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກ;
2. ຍື່ນຄຳຮ້ອງເຂົ້າຮ່ວມການແຂ່ງຂັນຄັດເລືອກ.

**ມາດຕາ 13 ການລົງທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກ**

ການລົງທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກ ແມ່ນການເກັບກຳຂໍ້ມູນວິສາຫະກິດ ທີ່ມີຄວາມສົນໃຈ ແລະ ທີ່ມີເງື່ອນໄຂ ເຂົ້າຮ່ວມການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດ.

ວິສາຫະກິດທີ່ມີຈຸດປະສົງເຂົ້າຮ່ວມການແຂ່ງຂັດຄັດເລືອກ ຕ້ອງຍື່ນລົງທະບຽນນຳ ກົມມາດຕະຖານ ແລະ ວັດແທກ ກ່ອນເດືອນ ມີນາ ຂອງແຕ່ລະປີ ໂດຍມີເອກະສານປະກອບ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ທີ່ ກົມມາດຕະຖານ ແລະ ວັດແທກ ໄດ້ກຳນົດ;
2. ບົດລາຍງານໂດຍລວມ ກ່ຽວກັບວິສາຫະກິດຂອງຕົນ ໃນໄລຍະຜ່ານມາ;
3. ບົດລາຍງານ ຕີລາຄາດ້ວຍຕົນເອງຕາມມາດຖານການຄັດເລືອກ ທີ່ກຳນົດໃນມາດຕາ 15 ຂອງຂໍ້ຕົກລົງສະບັບນີ້;

4. ສຳເນົາ ເອກະສານຢັ້ງຢືນ ແລະ ເອກະສານກ່ຽວຂ້ອງໃນການນຳໃຊ້ລະບົບການຄຸ້ມຄອງຄຸນນະພາບທີ່ກ້າວໜ້າ;
5. ສຳເນົາ ເອກະສານຢັ້ງຢືນ ກ່ຽວກັບຄວາມສອດຄ່ອງຂອງຜະລິດຕະພັນສິນຄ້າ ຫຼື ການບໍລິການກັບມາດຕະຖານແຫ່ງຊາດ, ລະບຽບການເຕັກນິກທີ່ກ່ຽວຂ້ອງ;
6. ສຳເນົາ ໃບຢັ້ງຢືນການປະຕິບັດພັນທະອາກອນ ແລະ ການປະຕິບັດລະບອບປະກັນສັງຄົມໃຫ້ແກ່ຜູ້ອອກແຮງງານ ຂອງປີຜ່ານມາ;
7. ສຳເນົາ ບັນດາເອກະສານອ້າງອີງອື່ນ ທີ່ກ່ຽວຂ້ອງກັບຜົນການເຄື່ອນໄຫວຜະລິດທຸລະກິດ.

**ມາດຕາ 14 ການຍື່ນຄຳຮ້ອງເຂົ້າຮ່ວມການແຂ່ງຂັນຄັດເລືອກ**

ຜູ້ທີ່ໄດ້ລົງທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກແລ້ວ ກ່ອນຈະເຂົ້າຮ່ວມຄັດເລືອກໃນແຕ່ລະຄັ້ງ ແມ່ນໃຫ້ຍື່ນຄຳຮ້ອງຕໍ່ ກົມມາດຕະຖານ ແລະ ວັດແທກ ພາຍໃນກຳນົດເວລາຕາມປະກາດແຈ້ງການ ໂດຍມີເອກະສານປະກອບ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ທີ່ ກົມມາດຕະຖານ ແລະ ວັດແທກ ໄດ້ກຳນົດ;
2. ໃບຢັ້ງຢືນການລົງທະບຽນເຂົ້າຮ່ວມການແຂ່ງຂັນຄັດເລືອກ ທີ່ອອກໂດຍ ກົມມາດຕະຖານ ແລະ ວັດແທກ;
3. ຂໍ້ມູນ ແລະ ຜົນງານ ທີ່ນຳໄປພິຈາລະນາໃນການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ໄລຍະໜຶ່ງ ປີ ຜ່ານມາ.

**ມາດຕາ 15 ມາດຖານການຄັດເລືອກ**

ມາດຖານການຄັດເລືອກ ປະກອບມີ ເຈັດ ມາດຖານ ດັ່ງນີ້:

1. ການວາງແຜນຍຸດທະສາດ;
2. ນະໂຍບາຍຕໍ່ລູກຄ້າ ແລະ ຕະຫຼາດ;
3. ການຂຶ້ນທະບຽນ ແລະ ການນຳໃຊ້ກາໝາຍມາດຕະຖານຜະລິດຕະພັນສິນຄ້າ;
4. ການກວດສອບຄຸນນະພາບ ຜະລິດຕະພັນ ແລະ ສິນຄ້າ;
5. ການຄຸ້ມຄອງ ແລະ ພັດທະນາແຮງງານ;
6. ການບໍລິຫານໃນການຈັດຕັ້ງປະຕິບັດວຽກງານ;
7. ໝາກຜົນຂອງການເຄື່ອນໄຫວ.

**ມາດຕາ 16 ຂັ້ນຕອນ ແລະ ວິທີການຄັດເລືອກ**

ການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ປະກອບມີ ສອງ ຂັ້ນຕອນ ດັ່ງລຸ່ມນີ້:

1. ການປະເມີນຂອງຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ;
2. ການປະເມີນຂອງສະພາລາງວັນຄຸນນະພາບແຫ່ງຊາດ.

ວິທີການຄັດເລືອກ ແມ່ນມອບໃຫ້ ກົມມາດຕະຖານ ແລະ ວັດແທກ ຄົ້ນຄວ້າອອກບົດແນະນຳລະອຽດກ່ຽວກັບ ວິທີການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ໂດຍສອດຄ່ອງກັບສະພາບຕົວຈິງໃນແຕ່ລະໄລຍະ.

**ມາດຕາ 17 ການປະເມີນຂອງຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ**

ການປະເມີນຂອງຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ໃຫ້ປະຕິບັດ ດັ່ງນີ້:

1. ກວດກາຄວາມຖືກຕ້ອງຂອງເອກະສານ ແລະ ປະເມີນຕີລາຄາ ຕາມເອກະສານ ທີ່ໄດ້ຮັບຕາມທີ່ກຳນົດໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;
2. ດຳເນີນການປະເມີນຕີລາຄາການເຄື່ອນໄຫວທຸລະກິດຢູ່ສະຖານທີ່ຂອງບັນດາວິສາຫະກິດ ທີ່ຜ່ານການກວດກາ ແລະ ປະເມີນຕີລາຄາເອກະສານ;
3. ກວດກາຂະບວນການຜະລິດ ຫຼື ການບໍລິການ;

4. ເກັບຕົວຢ່າງ ເພື່ອດຳເນີນການກວດສອບ ແລະ ທົດສອບ ຕາມມາດຕະຖານ.

ພາຍຫຼັງຜ່ານການປະເມີນຕີລາຄາຢູ່ສະຖານທີ່ຂອງວິສາຫະກິດແລ້ວ ຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ຕ້ອງສະຫຼຸບລາຍງານໃຫ້ສະພາລາງວັນຄຸນນະພາບແຫ່ງຊາດເພື່ອພິຈາລະນາ ໂດຍມີເອກະສານປະກອບ ຄື:

1. ບົດລາຍງານຂອງຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ກ່ຽວກັບ ຜົນການພິຈາລະນາປະເມີນຕີລາຄາວິສາຫະກິດ ໂດຍຄັດຕິດ ຕາຕະລາງສັງລວມຄະແນນ, ບົດບັນທຶກຕີລາຄາກັບທີ່, ບັນຊີລາຍຊື່ຂອງວິສາຫະກິດທີ່ສະເໜີໃຫ້ລາງວັນຄຸນນະພາບແຫ່ງຊາດ ແລະ ບົດບັນທຶກການປະຊຸມຂອງຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ;
2. ຊຸດເອກະສານກ່ຽວຂ້ອງຂອງວິສາຫະກິດ ຕາມທີ່ກຳນົດໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 18 ການປະເມີນຂອງສະພາລາງວັນຄຸນນະພາບແຫ່ງຊາດ**

ພາຍຫຼັງໄດ້ຮັບເອກະສານສະຫຼຸບລາຍງານຈາກຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ, ສະພາລາງວັນຄຸນນະພາບແຫ່ງຊາດຕ້ອງຄົ້ນຄວ້າພິຈາລະນາຕາມເງື່ອນໄຂມາດຕະຖານທີ່ກຳນົດໄວ້. ກໍລະນີຈຳເປັນສະພາລາງວັນຄຸນນະພາບແຫ່ງຊາດອາດສະເໜີໃຫ້ຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ປະເມີນຕີລາຄາ ແລະ ກວດກາວິສາຫະກິດຄືນ ເພື່ອໃຫ້ໄດ້ຂໍ້ມູນຄົບຖ້ວນຮອບດ້ານ ໃນພິຈາລະນາຕົກລົງໃຫ້ລາງວັນ.

ເມື່ອສຳເລັດການປະເມີນ ສະພາລາງວັນຄຸນນະພາບແຫ່ງຊາດຕ້ອງລາຍງານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະເໜີໃຫ້ພິຈາລະນາອອກຂໍ້ຕົກລົງຮັບຮອງຜູ້ຖືກຄັດເລືອກໃຫ້ໄດ້ຮັບລາງວັນຄຸນນະພາບແຫ່ງຊາດ ໂດຍມີເອກະສານປະກອບ ດັ່ງນີ້:

1. ບົດລາຍງານການຕີລາຄາ ຕາມເອກະສານ ແລະ ການຕີລາຄາກັບທີ່;
2. ບົດບັນທຶກກອງປະຊຸມຂອງສະພາລາງວັນຄຸນນະພາບແຫ່ງຊາດ;
3. ບັນຊີລາຍຊື່ວິສາຫະກິດທີ່ໄດ້ຮັບການຄັດເລືອກໃຫ້ໄດ້ຮັບລາງວັນ;
4. ເອກະສານກ່ຽວຂ້ອງອື່ນ.

## ໝວດທີ 4
## ການຈັດຕັ້ງຮັບຜິດຊອບວຽກງານການຄັດເລືອກລາງວັນຄຸນນະພາບແຫ່ງຊາດ

**ມາດຕາ 19 ການຈັດຕັ້ງຮັບຜິດຊອບວຽກງານການຄັດເລືອກລາງວັນຄຸນນະພາບແຫ່ງຊາດ**

ການຈັດຕັ້ງຮັບຜິດຊອບວຽກງານການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ປະກອບມີ:

1. ສະພາລາງວັນຄຸນນະພາບແຫ່ງຊາດ;
2. ກົມມາດຕະຖານ ແລະ ວັດແທກ;
3. ຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ.

**ມາດຕາ 20 ສະພາລາງວັນຄຸນນະພາບແຫ່ງຊາດ**

ສະພາລາງວັນຄຸນນະພາບແຫ່ງຊາດ ຂຽນຫຍໍ້ "ສລຊ" ແມ່ນແຕ່ງຕັ້ງໂດຍ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີຂອງກົມມາດຕະຖານ ແລະ ວັດແທກ ປະກອບມີ ສິບແອັດ ທ່ານ ຄື:

1. ທ່ານ ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ຜູ້ຊີ້ນຳວຽກງານ ມາດຕະຖານ ແລະ ວັດແທກ — ເປັນປະທານ
2. ທ່ານ ຫົວໜ້າກົມມາດຕະຖານ ແລະ ວັດແທກ — ຮອງປະທານ
3. ທ່ານ ຜູ້ຕາງໜ້າ ຈາກກະຊວງສາທາລະນະສຸກ — ເປັນຄະນະ
4. ທ່ານ ຜູ້ຕາງໜ້າ ຈາກກະຊວງກະສິກຳ ແລະ ປ່າໄມ້ — ເປັນຄະນະ
5. ທ່ານ ຜູ້ຕາງໜ້າ ຈາກກະຊວງໂຍທາທິການ ແລະ ຂົນສົ່ງ — ເປັນຄະນະ

6. ທ່ານ ຜູ້ຕາງໜ້າ ຈາກກະຊວງພະລັງງານ ແລະ ບໍ່ແຮ່ ເປັນຄະນະ
7. ທ່ານ ຜູ້ຕາງໜ້າ ຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຄະນະ
8. ທ່ານ ຜູ້ຕາງໜ້າ ຈາກກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ
9. ທ່ານ ຜູ້ຕາງໜ້າ ຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ
10. ທ່ານ ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ
11. ທ່ານ ຜູ້ຕາງໜ້າ ຈາກມະຫາວິທະຍາໄລແຫ່ງຊາດລາວ ເປັນຄະນະ

ກອງປະຊຸມຂອງສະພາລາງວັນຄຸນນະພາບແຫ່ງຊາດ ຈະໄຂຂຶ້ນໄດ້ກໍຕໍ່ເມື່ອມີຈຳນວນຜູ້ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ.

ການຕັດສິນບັນຫາໃນກອງປະຊຸມຈະມີຜົນສັກສິດ ກໍຕໍ່ເມື່ອມີຜູ້ເຂົ້າຮ່ວມຢ່າງໜ້ອຍ ສາມສ່ວນຫ້າ ລົງຄະແນນສຽງເຫັນດີ.

ສະມາຊິກສະພາລາງວັນຄຸນນະພາບແຫ່ງຊາດ ມີອາຍຸການ ຫ້າ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

**ມາດຕາ 21 ກົມມາດຕະຖານ ແລະ ວັດແທກ**

ກົມມາດຕະຖານ ແລະ ວັດແທກ ແມ່ນ ການຈັດຕັ້ງ ຕາງໜ້າໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບໂດຍກົງ ໃນວຽກງານການຄັດເລືອກລາງວັນຄຸນນະພາບແຫ່ງຊາດ.

**ມາດຕາ 22 ຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ**

ຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ຂຽນຫຍໍ້ "ຄຄລຊ" ແມ່ນໄດ້ຮັບການແຕ່ງຕັ້ງໂດຍ ປະທານສະພາລາງວັນຄຸນນະພາບແຫ່ງຊາດ ຕາມການສະເໜີຂອງກົມມາດຕະຖານ ແລະ ວັດແທກ.

ຄຄລຊ ມີຫົວໜ້າຄະນະ, ຮອງຫົວໜ້າຄະນະ ແລະ ສະມາຊິກ ຈຳນວນ ເກົ້າ ທ່ານ ຂຶ້ນໄປ ໂດຍປະກອບດ້ວຍ ຜູ້ຕາງໜ້າຈາກກົມກ່ຽວຂ້ອງພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຂະແໜງການທີ່ກ່ຽວຂ້ອງ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ຄຄລຊ ແມ່ນຄະນະກຳມະການເຕັກນິກແຫ່ງຊາດໃນແຕ່ລະຂົງເຂດຜະລິດຕະພັນ ແລະ ການບໍລິການ ຈະໄດ້ຖືກແຕ່ງຕັ້ງແຕ່ລະຄັ້ງເພື່ອການຄັດເລືອກ ແລະ ສິ້ນສຸດພາລະໜ້າທີ່ໂດຍອັດຕະໂນມັດພາຍຫຼັງສຳເລັດການຄັດເລືອກໃນແຕ່ລະຄັ້ງ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງສະພາລາງວັນຄຸນນະພາບແຫ່ງຊາດ**

ສະພາລາງວັນຄຸນນະພາບແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

1. ແຕ່ງຕັ້ງຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ຕາມການສະເໜີຂອງ ກົມມາດຕະຖານ ແລະ ວັດແທກ;
2. ແຕ່ງຕັ້ງຄະນະກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ລົງກວດກາ ແລະ ຕີລາຄາວິສາຫະກິດທີ່ເຂົ້າຮ່ວມການແຂ່ງ ຂັນຄັດເລືອກວິສາຫະກິດທີ່ດີເດັ່ນ;
3. ພິຈາລະນາ, ຕີລາຄາ, ກວດກາເອກະສານ ແລະ ຄັດເລືອກວິສາຫະກິດທີ່ດີເດັ່ນ ຕາມການສະເໜີຂອງກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ;
4. ສົມທົບ ກົມມາດຕະຖານ ແລະ ວັດແທກ ຄົ້ນຄວ້າ ແລະ ພິຈາລະນາລາຍຊື່ຂອງວິສາຫະກິດ ທີ່ຈະນຳສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອໃຫ້ລາງວັນຄຸນນະພາບແຫ່ງຊາດ.
5. ສະເໜີ ກົມມາດຕະຖານ ແລະ ວັດແທກ ກ່ຽວກັບ ແຜນການຈັດຕັ້ງປະຕິບັດວຽກງານລາງວັນຄຸນນະພາບແຫ່ງຊາດ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຈາກຂັ້ນເທິງ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງ ກົມມາດຕະຖານ ແລະ ວັດແທກ**

ກົມມາດຕະຖານ ແລະ ວັດແທກ ມີສິດ ແລະ ໜ້າທີ່ ຄືດັ່ງນີ້:

1. ຄົ້ນຄວ້າ ສ້າງແຜນນະໂຍບາຍ, ນິຕິກຳ, ລະບຽບການ ແລະ ເອກະສານວິຊາສະເພາະກ່ຽວກັບວຽກງານລາງວັນຄຸນນະພາບແຫ່ງຊາດ;
2. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການໂຄສະນາ, ເຜີຍແຜ່, ແນະນຳ, ຈັດຕັ້ງປະຕິບັດວຽກງານລາງວັນຄຸນນະພາບແຫ່ງຊາດ;
3. ຮັບເອກະສານລົງທະບຽນ ແລະ ເອກະສານເຂົ້າຮ່ວມການແຂ່ງຂັນຄັດເລືອກລາງວັນຄຸນນະພາບແຫ່ງຊາດຂອງບັນດາວິສາຫະກິດ;
4. ຄົ້ນຄວ້າ ນຳສະເໜີ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາແຕ່ງຕັ້ງສະພາລາງວັນຄຸນນະພາບແຫ່ງຊາດ;
5. ຄົ້ນຄວ້ານຳສະເໜີປະທານສະພາລາງວັນຄຸນນະພາບແຫ່ງຊາດ ພິຈາລະນາແຕ່ງຕັ້ງຄະນະກຳມະການຄັດເລືອກລາງວັນແຫ່ງຊາດ;
6. ຄົ້ນຄວ້າ ແລະ ແຕ່ງຕັ້ງກອງເລຂາຊ່ວຍວຽກສະພາລາງວັນຄຸນນະພາບແຫ່ງຊາດ ແລະ ຄະນະກຳມະການຄັດເລືອກໃຫ້ລາງວັນຄຸນນະພາບແຫ່ງຊາດ;
7. ປະສານສົມທົບກັບ ສະພາລາງວັນຄຸນນະພາບແຫ່ງຊາດ ໃນການຄົ້ນຄວ້າ, ພິຈາລະນາຄັດເລືອກວິສາຫະກິດທີ່ດີເດັ່ນ ເພື່ອນຳສະເໜີ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ໃຫ້ລາງວັນຄຸນນະພາບແຫ່ງຊາດ;
8. ເປັນເຈົ້າການໃນການຈັດຕັ້ງພິທີມອບລາງວັນຄຸນນະພາບແຫ່ງຊາດໃຫ້ແກ່ວິສາຫະກິດ ແຕ່ລະປີ;
9. ຮ່ວມມືກັບພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານລາງວັນຄຸນນະພາບແຫ່ງຊາດ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ;
10. ແກ້ໄຂຄຳຮ້ອງ, ຄຳສະເໜີ ທີ່ພົວພັນເຖິງລາງວັນຄຸນນະພາບແຫ່ງຊາດ ເພື່ອລາຍງານ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາໃຫ້ທິດຊີ້ນຳແກ້ໄຂ;
11. ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວຽກງານລາງວັນຄຸນນະພາບແຫ່ງຊາດ ໃຫ້ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຊາບເປັນແຕ່ລະໄລຍະ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຈາກຂັ້ນເທິງ.

**ມາດຕາ 25 ສິດ ແລະ ໜ້າທີ່ຂອງ ກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ**

ກຳມະການຄັດເລືອກລາງວັນຄຸນນະພາບແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງລຸ່ມນີ້:

1. ຕີລາຄາ ແລະ ໃຫ້ຄະແນນວິສາຫະກິດ ທີ່ເຂົ້າຮ່ວມການຄັດເລືອກຕາມມາດຖານການຄັດເລືອກ;
2. ລາຍງານຜົນຂອງການຕີລາຄາ ແລະ ບັນດາຂໍ້ມູນທີ່ກ່ຽວຂ້ອງຂອງວິສາຫະກິດ ຕໍ່ສະພາລາງວັນເພື່ອພິຈາລະນາໃຫ້ລາງວັນຄຸນນະພາບແຫ່ງຊາດ;
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຈາກຂັ້ນເທິງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 26 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງລຸ່ມນີ້:

1. ລະເມີດຕໍ່ລະບຽບກົດໝາຍ ທີ່ພົວພັນເຖິງລາງວັນຄຸນນະພາບແຫ່ງຊາດ;
2. ນຳໃຊ້ສັນຍາລັກລາງວັນຄຸນນະພາບແຫ່ງຊາດ ທີ່ໄດ້ຮັບໃສ່ຜະລິດຕະພັນ ບໍ່ຖືກຕ້ອງຕາມເນື້ອໃນ.

**ມາດຕາ 27 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ລົງປະຕິບັດໜ້າທີ່ ໂດຍບໍ່ໄດ້ຮັບການແຕ່ງຕັ້ງ;
2. ປະລະໜ້າທີ່ໂດຍບໍ່ມີຄວາມຮັບຜິດຊອບ;
3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ ຫຼື ລຳອຽງຕໍ່ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ;
4. ຮັບສິນບົນ ຫຼື ສວຍໃຊ້ໜ້າທີ່ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
5. ບັງຄັບ, ນາບຂູ່ ໃຊ້ຄວາມຮຸນແຮງຕໍ່ບຸກຄົນອື່ນທີ່ກ່ຽວຂ້ອງ;
6. ປອມແປງເອກະສານ, ຖ່ວງດຶງແກ່ຍາວເວລາການຄົ້ນຄວ້າເອກະສານ;
7. ມີການກະທຳອື່ນທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

**ມາດຕາ 28 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ມີດັ່ງນີ້:

1. ສ້າງອຸປະສັກກີດຂວາງ, ແຊກແຊງການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່;
2. ສົມຮູ້ຮ່ວມຄິດ, ຊ່ວຍເຫຼືອ, ປົກບັງ, ຊຸກເຊື່ອງຜູ້ລະເມີດລະບຽບ ຫຼື ຂໍ້ຕົກລົງສະບັບນີ້;
3. ມີການກະທຳອື່ນທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 29 ງົບປະມານຮັບໃຊ້ການເຄື່ອນໄຫວ**

ງົບປະມານຮັບໃຊ້ການເຄື່ອນໄຫວວຽກງານລາງວັນຄຸນະພາບແຫ່ງຊາດ ແມ່ນນຳໃຊ້ງົບປະມານຈາກ:

1. ງົບປະມານ ຂອງກະຊວງອຸດສາຫະກຳ ແລະ ການຄ້າ;
2. ການປະກອບສ່ວນອຸປະຖຳຂອງພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ລວມທັງວິສາຫະກິດ ທີ່ເຂົ້າຮ່ວມການຄັດເລືອກລາງວັນຄຸນນະພາບແຫ່ງຊາດ.

**ມາດຕາ 30 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມມາດຕະຖານ ແລະ ວັດແທກ ເປັນເຈົ້າການປະສານສົມທົບພາກສ່ວນກ່ຽວຂ້ອງ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນ.

**ມາດຕາ 31 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ລັດຖະມົນຕີ

ປອ.ຄຳແພງ ໄຊສົມແພງ